ກອງທຶນຫລຸດຜ່ອນຄວາມທຸກຍາກ

<u>ຄູ່ມືກ່ຽວກັບ</u>:

ວຽກງານຕິດຕາມ-ປະເມີນຜົນ ແລະ

ຕົວຊີ້ບອກຜົນໄດ້ຮັບຂອງ ທລຍ 3 ໄລຍະເພີ່ມທຶນ

(2020–2024)



ຄູ່ມືສະບັບນີ້ ນຳໃຊ້ສະເພາະວຽກງານຂອງ ທລຍ 3 ໄລຍະເພີ່ມທຶນ (2020–2024), ມີເປົ້າໝາຍ ເພື່ອສ້າງຄວາມກະຈ່າງແຈ້ງ ກ່ຽວກັບຄວາມໝາຍ ຄວາມສຳຄັນຂອງວຽກງານຕິດຕາມ-ປະເມີນຜົນ, ລວມທັງຕົວຊີ້ບອກຜົນໄດ້ຮັບ ທີ່ທຸກຂະແໜງການ ແລະ ໜ່ວຍງານ ໃນແຕ່ລະຂັ້ນ ຕ້ອງໄດ້ເຂົ້າໃຈເປັນເອກະພາບກັນ ພ້ອມປະສານສົມທົບກັນ ເພື່ອຕິດຕາມ ແລະ ກວດກາ ພ້ອມຍັ້ງຍືນຜົນຂອງການຈັດຕັ້ງປະຕິບັດວຽກງານເປັນປະຈຳ.

ກະກຽມໂດຍ: ຕິດຕາມ-ປະເມີນຜົນ ທລຍ ສູນກາງ
ປອ.ຫັດທະຈັນ ພິມພັນທະວົງ
ທ່ານ ສົມຈິດ ເພັດສະດາ

(ນະຄອນຫລວງວຽງຈັນ, ກຸມພາ 2020)

ສາລະບານ

ສາລະບານ.....2
I. ຈຸດປະສົງ ແລະ ຄາດໝາຍ 2
II. ພາລະບົດບາດຜູ້ຮັບຜິດຊອບວຽກງານຕິຕາມ-ປະເມີນຜົນ.....3
III. ຄວາມຮັບຜິດຊອບຕໍ່ລະບົບຖານຂໍ້ມູນ ແລະ ການນຳໃຊ້ແບບຟອມ 6
IV. ການຕິດຕາມ ແລະ ປະເມີນຜົນ (Monitoring and Evaluation).....7
V. ບັນດາຕົວຊີ້ວັດຂອງໂຄງການ ທີ່ ພະນັກງານທຸກຄົນຕ້ອງເຂົ້າໃຈ 10
ແຫຼງຂໍ້ມູນ: ຕິດຕາມ-ປະເມີນຜົນ ທລຍ..... 20
VI. ຂໍ້ມູນອື່ນໆ ທີ່ຕ້ອງເອົາເຂົ້າລະບົບຖານຂໍ້ມູນ ແລະ ລາຍງານ 21

ລາຍຊື່ພາບປະກອບ

ພາບປະກອບ 1: ຮອບວຽນກິດຈະກຳປະຈຳປີ ຂອງ ທລຍ 4
ພາບປະກອບ 2: ການເຄື່ອນໄຫວຂໍ້ມູນຂອງ ທລຍ ໄລຍະເພີ່ມທຶນ 2020–2024.....5

I. ຈຸດປະສົງ ແລະ ຄາດໝາຍ

ວຽກງານຕິດຕາມ ແລະ ປະເມີນຜົນ ຖືວ່າເປັນວຽກງານທີ່ສຳຄັນ ທີ່ ຜູ້ໃຫ້ທຶນ ແລະ ລັດຖະບານແຫ່ງ ສປປ ລາວ ໃຫ້ຄວາມສຳຄັນຫຼາຍ ປຽບດັ່ງເປັນຂົວຕໍ່ລະຫວ່າງ ທລຍ ກໍ່ຄືລັດຖະບານ ແລະ ຜູ້ໃຫ້ທຶນ. ທັງນີ້ກໍ່ເພື່ອຕິດຕາມຄວາມຄືບໜ້າຂອງກາ ນຈັດຕັ້ງປະຕິບັດວຽກງານ ແລະ ລາຍງານຜົນໄດ້ຮັບຕໍ່ສັງຄົມ. ໂດຍອີງໃສ່ລະບຽບການກໍ່ຄືຈຸດປະສົງລວມຂອງໂຄງການທີ່ລະບຸໄວ້ໃນຄູ່ມືຈັດຕັ້ງປະຕິບັດຂອງ ທລຍ 3 ໄລຍະເພີ່ມທຶນ ໂດຍຜັນຂະຫຍາຍຈາກຄູ່ມືຂອງ ທີ່ຜ່ານມາ ເປັນຕົ້ນບັນດາຕົວຊີ້ບອກຜົນໄດ້ຮັບຕ່າງໆຂອງໂຄງການ. ດັ່ງນັ້ນ, ຄວາມຊັດເຈນ ແລະ ຖືກຕ້ອງຂອງຂໍ້ມູນຄືຄາດໝາຍສູ້ຊົນຂອງວຽກງານຕິດຕາມ-ປະເມີນຜົນ ທັງນີ້ກໍ່ເພື່ອໃຫ້ສາ ມາດຕີລາຄາຜົນໄດ້ຮັບຂອງໂຄງການວ່າມີຄວາມຊັດເຈນ ແລະ ເປັນບົດຮຽນໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ການລາຍງານຜ່ານຕົວຊີ້ບອກ ເປັນເຄື່ອງມືໜຶ່ງ ທີ່ເປັນເອກະສານອ້າງອີງຜົນສຳເລັດຂອງໂຄງການ ດ້ວຍເຫດນັ້ນຂໍ້ມູນທີ່ສຳຄັນຄວນໄດ້ມາຈາກລະບົບຖານຂໍ້ມູນ ທີ່ໄດ້ຜ່ານການສັງລວມ ແລະ ຕິດຕາມເອົາຂໍ້ມູນຕ່າງໆມາຈາກ ແຂວງ, ເມືອງ, ກຸ່ມບ້ານ ແລະ ຂັ້ນບ້ານ. ຈາກນັ້ນທາງທີມງານຕິດຕາມ ແລະ ປະເມີນຜົນຂັ້ນສູນກາງເປັນຜູ້ສັງລວມ ແລະ ກະກຽມບົດລາຍງານຕ່າງໆ ທັງພາສາລາວ ແລະ ພາສາອັງກິດ ພາຍໃຕ້ການປຶກສາຫາລື ພາຍໃຕ້ການຊີ້ນຳຂອງຜູ້ອຳນວຍການບໍລິຫານ ແລະ ຄະນະບໍລິ ຫານ ທລຍ ຂັ້ນສູນກາງ.

ໃນດ້ານຄວາມສຳຄັນ, ທຸກຂໍ້ມູນໃນຖານຂໍ້ມູນ ຈະຖືກນຳໃຊ້ເຂົ້າໃນບັນດາວຽກສຳຄັນຄື: ການວິໄຈຜົນກະທົບຂອງໂຄງການ, ລາຍງານຄວາມຄືບໜ້າຂອງໂຄງການ, ກວດສອບຄວາມໂປ່ງໃສ ແລະ ຄວາມຮັບຜິດຂອງພະນັກງານຢູ່ແຕ່ລະຂັ້ນ ແລະ ການສຶກສາວິໄຈອື່ນໆທີ່ຕິດພັນກັບວຽກຕິດ ຕາມ-ປະເມີນຜົນ, ການຕີລາຄາຜົນໄດ້ຮັບ ແລະ ລາຍງານ.

II. ພາລະບົດບາດຜູ້ຮັບຜິດຊອບວຽກງານຕິດຕາມ-ປະເມີນຜົນ

ວຽກຫລັກຂອງຜູ້ຮັບຜິດຊອບວຽກງານ ຕິດຕາມ-ປະເມີນຜົນ
1. ສະໜອງຂໍ້ມູນທີ່ມີປະສິດທິພາບ ເປັນພາລະບົດບາດຂອງພະນັກງານທຸກຄົນ ທີ່ກ່ຽວຂ້ອງກັບການເກັບກຳຂໍ້ມູນ ແລະ ການເຄື່ອນໄຫວວຽກງານ ທລຍ; 2. ການລາຍງານທີ່ມີຄຸນນະພາບ ແລະ ທັນກັບເວລາ (ຖືກຕ້ອງ ແລະ ຊັດເຈນ); 3. ອະທິບາຍກ່ຽວກັບຕົວຊີ້ບອກໂຄງການ ແລະ ແຫຼ່ງທີ່ມາຂອງຂໍ້ມູນ ໃຫ້ທຸກພາກສ່ວນໄດ້ ໂດຍສະເພາະແບບຟອມຕ່າງໆ ທີ່ຕ້ອງປ້ອນເຂົ້າໃນລະບົບຖານຂໍ້ມູນ; 4. ກຳໄດ້ທຸກສະຖານະພາບຂອງການກໍ່ສ້າງໂຄງການຍ່ອຍ ນຳໃຊ້ໄດ້ ຫລື ບໍ່ໄດ້ ລວມທັງວິທີການແກ້ໄຂ, ການບຳລຸງຮັກສາ, ອື່ນໆ. ພ້ອທັງວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພສະນາການ ທີ່ຕິພັນກັບການເຄື່ອນໄຫວຕ່າງໆ.
ໜ້າທີ່ຂອງຜູ້ຮັບຜິດຊອບວຽກງານຕິດຕາມ - ປະເມີນຜົນ ຂັ້ນທ້ອງຖິ່ນ
1. ເປັນເສນາທິການໃຫ້ແກ່ຄະນະຊີ້ນຳໂຄງການ ຂັ້ນທ້ອງຖິ່ນ ແລະ ສູນກາງ ທັງສາຍຕັ້ງແລະ ສາຍຂວາງ ເປັນໃຈກາງໃນການຕິດຕາມ ແລະ ລາຍງານ ກິດຈະກຳຂອງ ທລຍ ໃນແຂວງ ແລະ ເມືອງຂອງຕົນ; 2. ກວດກາ ແລະ ກັ່ນຕອງຄວາມຖືກຕ້ອງຂອງຂໍ້ມູນ ໂດຍການປະສານ ສົມທົບກັບທີມງານທີ່ກ່ຽວຂ້ອງຂັ້ນຕ່າງໆພາຍໃນແຂວງ ແລະ ເມືອງ ລວມທັງຊາວບ້ານ; 3. ກຳໄດ້ຂໍ້ມູນທາງດ້ານສະຖິຕິຂອງແຂວງ ແລະ ຂອງປະເທດ ເພື່ອເປັນບ່ອນອ້າງອີງ.
ເຮັດແນວໃດຈຶ່ງສາມາດເກັບກຳຂໍ້ມູນທັງໝົດໄດ້ ?
1. ຕ້ອງເຂົ້າໃຈພາລະບົດບາດຂອງຕົນ ພ້ອມກັບປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະພາກສ່ວນທີ່ລົງເກັບກຳຂໍ້ມູນ ແລະ ຈັດຕັ້ງປະຕິບັດ ແລະ *ປ້ອນຂໍ້ມູນເຂົ້າສູ່ລະບົບ*; 2. ຮັກສາເອກະສານຕ່າງໆທີ່ສຳຄັນຂອງໂຄງການ ລວມທັງຂໍ້ມູນທັງໝົດ ທີ່ກ່ຽວຂ້ອງກັບກິດຈະກຳ ແລະ ການນຳໃຊ້ງົບປະມານທັງໝົດ ແລະ ເຂົ້າໃຈກ່ຽວກັບແບບຟອມຕ່າງໆ. 3. ພົວພັນເພື່ອເກັບກຳຂໍ້ມູນກັບທຸກພາກສ່ວນ ແຕ່ຂັ້ນບ້ານ ເຖິງຂັ້ນແຂວງ ເຊັ່ນ: ອົງການປົກ ຄອງຂັ້ນທ້ອງຖິ່ນ, ລັດ ແລະ ທຸກອົງການຊ່ວຍເຫຼືອ ເພື່ອການພັດທະນາເສດຖະກິດ-ສັງຄົມ, ໂດຍພາຍໃຕ້ການຊີ້ນຳ ແລະ ເຫັນດີຂອງຫົວໜ້າສາຍງານ ແລະ ຄະນະຊີ້ນຳໂຄງການ.
ການປະເມີນ ແລະ ວິເຄາະຂໍ້ມູນ
1. ການປະເມີນພາຍໃນ ໄດ້ອີງໃສ່ຕົວຊີ້ບອກຕ່າງໆ ຂອງ ທລຍ ລວມເຖິງການຕິດຕາມຄວາມຄືບໜ້າຂອງ ວຽກ ແລະ ການປະເມີນ ການນຳໃຊ້ ແລະ ບຳລຸງຮັກສາໂຄງການ. 2. ການປະເມີນຈາກພາຍນອກ ທີ່ກ່ຽວຂ້ອງກັບການປະເມີນຜົນກະທົບຂອງໂຄງການ ລວມທັງການປະເມີນໄລຍະຕົ້ນ ແລະ ການປະເມີນໄລຍະທ້າຍໂຄງການ. 3. ການປະເມີນ ຈັດປະເພດຄວາມເຂັ້ມແຂງຂອງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ພ້ອມປະເມີນຜົນວຽກງານໂພສະນາການ. 4. ປະເມີນຜົນໄດ້ຮັບຂອງກິດຈະກຳອື່ນໆຂອງໂຄງການ ຮ່ວມກັບນັກຄົ້ນຄວ້າຈາກທາງນອກ ເພື່ອຢັ້ງຢືນຜົນໄດ້ຮັບ, ສິ່ງທ້າທາຍ ພ້ອມບົດຮຽນຕ່າງໆ ທີ່ຕ້ອງໄດ້ຮັບການປັບປຸງ ແລະ ຜັນຂະຫຍາຍໃນຕໍ່ໜ້າ.

ພາບປະກອບ 1: ຮອບວຽນກິດຈະກຳປະຈຳປີ ຂອງ ທລຍ

- ກອງປະຊຸມກວດກາປະເມີນຜົນ
- ການຢ້ຽມຢາມລະຫວ່າງກຸ່ມບ້ານ
- ຝຶກອົບຮົມການຄຸ້ມຄອງ ແລະ ບຳລຸງ

- **FIF: Final Inspection Form**

- ຂັ້ນສູນກາງ
- ຂັ້ນແຂວງ
- ຂັ້ນເມືອງ ແລະ ກຸ່ມບ້ານ
  - **PDKV: Province, District, Kumban, Villages**

- ສະຫລຸບການໃຊ້ຈ່າຍປະຈຳງວດ
- ຈັດຕັ້ງປະຕິບັດໂຄງການ
- ຝຶກອົບຮົມວິຊາການ

- ການວາງແຜນພັດທະນາບ້ານ
- ການວາງແຜນພັດທະນາກຸ່ມບ້ານ

- **VDP: Village Development Plan**
- **KDP: Kumban Development Plan**
- **DCPM: District Coordination**

- ຄວາມຄືບໜ້າ SPIM: Sub-project implementation form
- ການຢ້ຽມຢາມ. SVR: Site visit report form

- ສຳຫລວດອອກແບບໂຄງການຍ່ອຍ (Survev
- **I_SPP: Infrastructure sub-project Proposal Form**

ໝາຍເຫດ: *ການອອກແບບລະບົບຕິດຕາມ-ປະເມີນຜົນ ຜ່ານລະບົບຖານຂໍ້ມູນ, ໄດ້ອອກແບບ ເພື່ອຮັບຮອງໜ້າວຽກເປັນຮອບວຽນຂອງປີ ທຸກກິດຈະກຳທີ່ນອນໃນອົງປະກອບ ຂອງໂຄງການ ໄດ້ຖືກບັນຈຸ ແລະ ເກັບຮັກສາ ເປັນລະບົບ. ມີຜູ້ຮັບຜິດຊອບສະເພາະ ທັງກວດກາ ແລະ ປ້ອນຂໍ້ມູນ ພ້ອມຕີລາຄາ ແລະ ລາຍງານເປັນປົກກະຕິ.*

ພາບປະກອບ 2: ການເຄື່ອນໄຫວຂໍ້ມູນຂອງ ທລຍ ໄລຍະເພີ່ມທຶນ 2020-2024



ໝາຍເຫດ: *ການເຄື່ອນໄຫວວຽກງານ ທລຍ3 ໄລຍະເພີ່ມທຶນ, ລະບົບຂໍ້ມູນຈະຖືກປ້ອນແຕ່ຂັ້ນບ້ານ ໂດຍພະນັກງານຂັ້ນບ້ານ ຮ່ວມກັບຫົວໜ້າ ທລຍ ເມືອງ ໃນພື້ນທີ່ຂອງ ໂຄງການ, ຂໍ້ມູນທັງໝົດຈະຖືກກັ່ນຕອງ ແລະ ກວດກາຄວາມຖືກຕ້ອງ ໂດຍຫົວໜ້າ ທລຍ ພ້ອມທີມງານຂັ້ນເມືອງ. ພະນັກງານທີ່ຮັບຜິດຊອບ ຈະມີລະຫັດສະເພາະ (ID CODE) ທີ່ຜູ້ຮັບຜິດຊອບຂັ້ນສູນກາງເປັນຜູ້ກຳນົດໃຫ້. ສະນັ້ນເວລາມີປັນຫາ ຈຶ່ງຈະສາມາດຕິດຕາມ ແລະ ແກ້ໄຂຮ່ວມກັບຜູ້ຮັບຜິດຊອບໄດ້ທັນເວລາ. ຄຸນນະພາບຂອງຂໍ້ມູນ ຈະນຳໃຊ້ໃນ ການປະເມີນຜົນການເຮັດວຽກປະຈຳປີຂອງພະນັກງານແຕ່ລະແຂວງ ແລະ ເມືອງ ລວມທັງສາຍງານຂັ້ນສູນກາງ.*

III. ຄວາມຮັບຜິດຊອບຕໍ່ລະບົບຖານຂໍ້ມູນ ແລະ ການນຳໃຊ້ແບບຟອມ

- **ຕິດຕາມ–ປະເມີນຜົນ (ME):** ຂໍ້ມູນພື້ນຖານທຸກຂໍ້ມູນ, ຂໍ້ມູນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການ, ກສກ ແລະ ອື່ນໆ ແລະ ກຳໄດ້ລາຍລະອຽດກ່ຽວກັບຕົວຊີ້ວັດ. ເຂົ້າຮ່ວມການປະເມີນໂຄງການກັບຊ່ຽວຊານ ທັງພາຍໃນ ແລະ ຕ່າງປະເທດ.
- **ວຽກງານໂພຊະນາການ & ພັດທະນາຊຸມຊົນ (NCD):** ຂໍ້ມູນກອງປະຊຸມແນະນຳໂຄງການ, ຂໍ້ມູນການວາງແຜນຂັ້ນບ້ານ, ຂັ້ນກຸ່ມບ້ານ, ແລະຂັ້ນເມືອງ. ຂໍ້ມູນຕົວແທນບ້ານ ແລະ ຄະນະຮັບຜິດຊອບຂັ້ນກຸ່ມບ້ານ.
  - ✓ **ວຽກງານໂພຊະນາການ:** ຕ້ອງເກັບກຳຂໍ້ມູນກ່ຽວກັບວຽກງານ ຜ່ານຕົວຊີ້ບອກ ແລະ ຜົນໄດ້ຮັບອື່ນໆ ຕາມແບບຟອມທີ່ໄດ້ກຳນົດໄວ້ (ເຮັດຮ່ວມກັບວຽກງານ ພັດທະນາຊຸມຊົນ).

ໝາຍເຫດ: *ທຸກກອງປະຊຸມ ແລະ ຝຶກອົບຮົມຂອງວຽກງານພັດທະນາຊຸມຊົນ ຕ້ອງກຳໄດ້ ຜູ້ເຂົ້າຮ່ວມທັງ ໝົດ, ຊົນເຜົ່າ, ແມ່ຍິງ, ຝ່າຍລັດ, ອື່ນໆ*

- **ວິສະວະກຳ (TA):** ຮັບຜິດຂອບຂໍ້ມູນບົດສະເໜີໂຄງການຍ່ອຍ, ຂໍ້ມູນກ່ຽວກັບການລົງຕິດຕາມໂຄງການຍ່ອຍ, ການກວດຮ້ອຍ ແລະ ການລົງຢ້ຽມຢາມກຸ່ມບ້ານ .

ໝາຍເຫດ: ວຽກງານວິຊາການຕ້ອງກຳໄດ້ການເຂົ້າຮ່ວມຂອງຂະແໜງການກ່ຽວຂ້ອງ ເວລາສຳຫຼວດອອກແບບ, ການຕິດຕາມວຽກ ແລະ ການກວດ 100%, ໂຄງການຊຸມຊົນຈັດຕັ້ງປະຕິບັດເອງ, ກຸ່ມບູລະນະເສັ້ນທາງ, ຜົນກະທົບດ້ານສິ່ງແວດລ້ອມ ແລະ ໄພພິບັດຕ່າງ.

- **ການເງິນ ແລະ ຈັດຊື້-ຈັດຈ້າງ (FA & Procurement):** ຮັບຜິດຊອບຂໍ້ມູນຂອງການປະມູນ, ງົບປະ ມານ ຫລັງຈາກການປະມູນ ແລະ ແຜນການຕິດຕາມສັນຍາ ການເບີກຈ່າຍງົບປະມານໂຄງການຍ່ອຍ ແລະ ງົບ ປະມານຝຶກ ອົບຮົມຕ່າງໆ ຕ້ອງປະສານສົມທົບກັບຜູ້ຮັບຜິດຊອບ ວຽກງານສ້າງຄວາມເຂັ້ມແຂງ ແລະ ລະບົບບໍລິຫານຂໍ້ມູນ.
- **ວຽກງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່:** ຮັບຜິດຊອບຂໍ້ມູນທີ່ກ່ຽວຂ້ອງກັບວຽກງານຂອງຕົນ ເປັນຕົ້ນ ການເຄື່ອນໄຫວ ກຊກ ແລະ ກຸ່ມການຜະລິດ, ການຝາກ, ການທ້ອນ ແລະ ການກູ້ຢືມຕ່າງໆ.

ໝາຍເຫດ:

1) *ທຸກຂະແໜງການ ແລະ ໜ່ວຍງານຕ້ອງກວດກາຄວາມຖືກຕ້ອງຂອງຂໍ້ມູນທີ່ຕົນຮັບຜິດຊອບ, ຢັ້ງຢືນ ພ້ອມ ຮັບຮອງ ໂດຍຜູ້ປະສານງານ ທລຍ ເມືອງ ແລະ ທຽບໃສ່ຕົວຊີ້ວັດຜົນໄດ້ຮັບ. ສະເພາະວຽກງານປັບປຸງຊີວິດການ ເປັນຢູ່ ແລະ ໂພສະນາການ ຈະຖືກປ້ອນໂດຍພະນັກງານຂັ້ນບ້ານ ຂອງ ທລຍ.*
2) *ຜູ້ຮັບຜິດຊອບຕິດຕາມ-ປະເມີນຜົນ ສູນກາງຈະຝຶກໃຫ້ພະນັກງານທີ່ຮັບຜິດຊອບ ເພື່ອເປັນຄູຝຶກ ໃນເມືອງທີ່ຕົນ ຮັບຜິດຊອບ.*
3) *ການປ້ອນຂໍ້ມູນເລີ້ມຈາກຂັ້ນບ້ານ ແລະ ເມືອງ ສະນັ້ນ ຕ້ອງມີຜູ້ຮັບຜິດຊອບຂັ້ນດັ່ງກ່າວ (ສະເພາະ 4 ແຂວງ ໄລຍະເພີ່ມທຶນ), ສະເພາະ 6 ແຂວງ ຍັງເຫຼືອ ປະຕິບັດຄືເກົ່າ.*

IV. ການຕິດຕາມ ແລະ ປະເມີນຜົນ (Monitoring and Evaluation)

1. **ການຕິດຕາມທົ່ວໄປ** *(Regular Monitoring):* ການຕິດຕາມໜ້າວຽກພາຍໃຕ້ຄວາມຮັບຜິດຊອບຂອງພະນັກ ງານ ທລຍ ລວມທັງການປະເມີນພາຍໃນ ທລຍ (ສູນກາງ, ແຂວງ, ເມືອງ ແລະ ບ້ານ) ໃນນີ້ຍັງລວມເອົາຜູ້ໄດ້ຮັບຜົນ ປະໂຫຍດ, ພະນັກງານຂັ້ນບ້ານ, ທີມງານຈັດຕັ້ງປະຕິບັດ, ຄະນະບໍລິຫານ ກຊກ, ພ້ອມທີມງານອື່ນໆຂັ້ນຊຸມຊົນທີ່ ກ່ຽວຂ້ອງ (VSMC, SHG, PG, FNG, VMC, VIT, RMG, CFA).
2. **ການເຮັດກໍລະນີສຶກສາ** *(Special Studies):* ໄດ້ຖືກຈັດຕັ້ງປະຕິບັດໃນແຕ່ລະໄລຍະເພື່ອສຶກສາຂໍ້ມູນໃນຮູບ ແບບຕ່າງໆຢ່າງເລິກເຊິ່ງ (ໂດຍຊ່ຽວຊານທາງນອກ).
3. **ການປະເມີນຜົນກະທົບ** *(Impact Evaluation):* ອີງໃສ່ການສຳຫຼວດຂໍ້ມູນພື້ນຖານ, ການປະເມີນໄລຍະກາງ ສະໃໝ ແລະ ປະເມີນຄັ້ງສຸດທ້າຍ (Final survey) ໂດຍຊ່ຽວຊານທາງນອກ.

ຕາຕະລາງ 1: ຂອບວຽກງານຕິດຕາມ-ປະເມີນຜົນ ພາຍໃຕ້ ທລຍ (Portfolio)

ການຕິດຕາມ (Monitoring) (ຂະບວນການປະເມີນ)		**ການປະເມີນຜົນ (Evaluation) (ປະສິດທິພາບຂອງການປະເມີນ)**	
ປັດໃຈ (Inputs)	**ຜົນຜະລິດ (Outputs)**	**ຜົນໄດ້ຮັບ (Outcomes)**	**ຜົນກະທົບ (Impact)**
- ຊັບພະຍາກອນ (Resource)	ອາຄານ(ສິ່ງກໍ່ສ້າງ)	ຜູ້ໄດ້ຮັບຜົນປະໂຫຍດ	ຊີວິດການເປັນຢູ່ດີຂຶ້ນ
- ພະນັກງານ (Staff)	ກຊກ/ກຸ່ມໂພຊະນາການ	ປຽ່ນແປງພຶດຕິກຳ	% ຫຼຸດຂອງເດັກນ້ອຍທີ່ຂາດສານ ອາຫານ ໃນພື້ນທີ່ເປົ້າໝາຍ
- ກອງທຶນ (Fund)	ຈຳນວນການຝຶກອົບຮົມ	ຄວາມເປັນເຈົ້າຂອງ	ເພີ່ມລາຍຮັບ
- ວັດສະດຸ (Material)	# ແຜນພັດທະນາບ້ານ	ຄວາມສະເໝີພາບບົດບາດຍິງຊາຍ/ການ ມີສ່ວນຮ່ວມຂອງຊົນເຜົ່າ	ຫຼຸດຜ່ອນຄວາມທຸກຍາກ
- ສິ່ງອຳນວຍຄວາມ ສະດວກ (Facilities)	ຜູ້ອຳນວຍຄວາມສະດວກ ທ້ອງຖິ່ນ/ຄະນະຈັດຕັ້ງ ປະຕິບັດຂັ້ນບ້ານ	ປັບປຸງຄຸນນະພາບຂອງດ້ານການເຂົ້າ ເຖິງການບໍລິການສາທາ	
- ການຈັດຫາ (Supply)	ຮູບແບບຂອງການພັດທະນາ		

ແຫຼ່ງຂໍ້ມູນ: ຂະແໜງຕິດຕາມ-ປະເມີນຜົນ

ຄວາມກ່ຽວເນື່ອງຜົນໄດ້ຮັບຂອງ ທລຍ ແຕ່ລະອົງປະກອບ

Components ອົງປະກອບ	Activities ກິດຈະກຳ	Outputs ຜົນຜະລິດ	Outcomes ຜົນໄດ້ຮັບໂຄງການ	Impacts ຜົນກະທົບ
ອົງປະກອບ 1: ທຶນ ສຳລັບວຽກງານ ພັດທະນາຊຸມຊົນ ແລະໂຄງລ່າງ	• ການກໍ່ສ້າງລາງພື້ນຖານຊຸມຊົນຂະໜາດ ນ້ອຍ. • ກອງປະຊຸມວາງແຜນຂັ້ນບ້ານ ແລະ ຂັ້ນ ເມືອງ • ຝຶກອົບຮົມກ່ຽວກັບການບໍລິຫານ ໂຄງການຍ່ອຍ, ການຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາສິ່ງກໍ່ສ້າງຕ່າງໆ. • ກຸ່ມບົວລະບັດຮັກສາເສັ້ນ ທາງໄດ້ສ້າງຕັ້ງ ຂຶ້ນ ແລະ ໄດ້ຮັບການຝຶກອົບຮົມ.	• ພື້ນຖານໂຄງລາງຊຸມຊົນໄດ້ຮັບ ການກໍ່ສ້າງ ແລະ ໄດ້ຖືກນຳໃຊ້. • ແຜນບ້ານ ແລະ ເມືອງໄດ້ມີການ ກະກຽມ ແລະ ນຳໃຊ້ສຳລັບເພື່ອ ບຸລິມາສິດຂອງການລົງທຶນ • ທຶນບໍ່ລິການໂຄງການຍ່ອຍໂດຍ ສະມາຊິກຂອງຊຸມຊົນ ແລະ ສຳເລັດການຈັດຊື້-ຈັດຈ້າງ ຢ່າງມີ ປະສິດຕິຜົນ • ແມ່ຍິງ ແລະ ຊົນເຜົ່າເຂົ້າຮ່ວມ ການຄັດເລືອກຮ່ວມການຄັດ ເລືອກບູລິມາສິດຂອງບ້ານຢ່າງຕັ້ງ ໜ້າ	• %ຫຼຸດເວລາໃຫ້ສັ້ນລົງສຳລັບການ ເດີນທາງຈາກບ້ານເຖິງສຸກສາລາ, ໂຮງຮຽນ, ແຫ່ງນ້ຳທີ່ສະອາດ, ແລະ ເສັ້ນທາງ ເຊິ່ງເດີນທາງຈາກ ບ້ານເຖິງກຸ່ມບ້ານ • ປັບປຸງຄຸນນະພາບຂອງສິ່ງ ອຳນວຍຄວາມສະດວກສາທະ ລະນະ ເຊັ່ນ: ໂຮງຮຽນ ແລະ ສຸກສາລາ. • ຄຸນນະພາບດ້ານເຕັກນິກຂອງ ການກໍ່ສ້າງແມ່ນສູງ. • ສະມາຊິກຂອງກຸ່ມບົວລະບັດ ເສັ້ນທາງມີລາຍຮັບ ເຊິ່ງໃນເມືອງ ກ່ອນເຂົ້າບໍ່ໄດ້ເຄີຍໄດ້ມີລາຍຮັບ ຫຍັງເລີຍ.	• ເປີເຊັນຫຼຸດລົງຂອງ ເດັກຂາດສານອາຫານ ອາຍຸຕ່ຳກວ່າ 5 ປີ (ໂດຍສຸມໃສ່ເດັກ ອາຍຸຕ່ຳກວ່າ 2 ປີ ຢູ່ ພາວະຂາດສານ ອາຫານໃນແຂວງເປົ້າ ໝາຍ)
ອົງປະກອບ 2: ການ ສ້າງຄວາມເຂັ້ມແຂງ ໃນການພັດທະນາ ໃຫ້ແກ່ທ້ອງຖິ່ນ ແລະ ຊຸມຊົນ	• ການ ຝອຮ ພະນັກງານ • ພະນັກງານລັດສະໜັບສະໜູນຊຸມຊົນໃນ ການຈັດຕັ້ງປະຕິບັດໂຄງການຍ່ອຍ • ຝອຮ ການປ້ອງກັນຜົນກະທົບທາງ ສັງຄົມ ແລະ ສິ່ງແວດລ້ອມ. • ຝອຮ ການຕິດຕາມປະເມີນຜົນ	• ຈຳນວນການຈັດການຝຶກອົບຮົມ. • ສາມາລົງສຸກຍູ້ຕິດຕາມພາກສະ ໜາມ	• ພະນັກງານມີຄວາມຮູ້ຄວາມ ສາມາດຫຼາຍຂຶ້ນ • ຮັບປະກັນຄວາມຍືນຍົງຂອງວຽກ ງານ ໂດຍຜ່ານການສະໜັບສະໜູ ນ ຂອງລັດຖະບານຕໍ່ຊຸມຊົນໃຫ້ ຫຼາຍຂຶ້ນ. • ຊຸມຊົນມີຄວາມສາມາດຫລາຍ ຂຶ້ນໃນການບໍລິຫານໂຄງລາງ ພື້ນຖານ ແລະ ຊັບສິນຕ່າງໆດ້ວຍ ຕົວເອງ ແລະ ເພີ່ມຄຸນນະພາບ ຂອງການໃຫ້ບໍລິການ. • ທີມງານຈັ້ດຕັ້ງປະຕິບັດຂັ້ນບ້ານ, ຄະນະກຳມະການບໍລິຫານກຸ່ມ	

			ກຊກ ຂັ້ນບ້ານ, ກຸ່ມ ກຊກ ມີ ຄວາມສະເໝີພາບຂອງບົດບາດ ຍິງ-ຊາຍ ໃນການເປັນຜູ້ນຳ.	
ອົງປະກອບ 3: ການບໍລິຫານໂຄງການ	• ການວ່າຈ້າງ ແລະ ການບໍລິຫານ ຂອງ ພະນັກງານ. • ການກວດສອບການເງິນ • ການເຮັດບົດລາຍງານການເງິນ ແລະ ການຈັດຊື້-ຈັດຈ້າງ. • ການບໍລິຫານຂອງລະບົບຄຸ້ມຄອງຂໍ້ມູນ ຂ່າວສານ ແລະ ລະບົບຕິດຕາມປະເມີນ ຜົນ ແລະ ການລາຍງານ. • ລະບົບຄຸ້ມຄອງລະບົບການແກ້ໄຂ ຄຳ ຮ້ອງທຸກຈາກຊຸມຊົນ.	• ບົດລາຍງານການເງິນ ແລະ ການ ກວດສອບ • ລະບົບຄຸ້ມຄອງຂໍ້ມູນຂ່າວສານ ແລະ ລະບົບຕິດຕາມປະເມີນ ຜົນ. • ບົດລາຍງານການຕິດຕາມ ແລະ ປະເມີນຜົນ. • ຈັດຈ້າງ-ຈັດຊື້ ສິ່ງຂອງ, ພະນັກງານ ແລະ ທີ່ປຶກສາ • ການແກ້ໄຂບັນຫາ	• ລະບົບການເງິນທີ່ມີການຄຸ້ມຄອງ ທີ່ດີ. • ການຈັດຕັ້ງປະຕິບັດໂຄງ ການທີ່ ມີເຕັກນິກສູງ. • ຜູ້ທີ່ໄດ້ຮັບຜົນປະໂຫຍດມີຄວາມ ເພິ່ງພໍໃຈສູງກັບຄຸນນະພາບການ ສະໜັບສະໜູນຈາກ ທລຍ	
ອົງປະກອບ 4: ສົ່ງເສີມວຽກງານ ໂພຊະນາການ ຜ່ານ ການພັດທະນາວຽກ ງານປັບປຸງຊີວິດ ການເປັນຢູ່	• ການສ້າງຕັ້ງຂອງ ກຊກ, ກຸ່ມຜະລິດ ແລະ ກຸ່ມໂພຊະນາການບ້ານ • ການຜະລິດອຸປະກອນສື່ສຳລັບການ ປ່ຽນແປງການປະພຶດທາງສັງຄົມສຸມໃສ່ ການເຊື່ອມສານກະສິກຳໂພຊະນາການ ແລະ ຄວາມເທົ່າທຽບຂອງບົດບາດຍິງ-ຊາຍ, ລວມທັງການຜະລິດວິດີໂອຊຸມ ຊົນ. • ກອງປະຊຸມຂອງ ກພກ, ກຸ່ມແປຮູບ ອາຫານກັບການນຳໃຊ້ເຄື່ອງບົດ, ການປຸງ ແຕ່ງອາຫານ, ແລະ ການລົງຢ້ຽມຢາມຄົວ ເຮືອນ. • ທົດລອງນຳໃຊ້ເຕົາໄຟສະອາດ ແລະ ການ ຜະລິດທອນຟືນຂອງທ້ອງຖິ່ນ • ການປ່ອຍກູ້ຂອງ ກພກ ໃຫ້ສະມາຊິກ ເພື່ອລົງທຶນໃສ່ກິດຈະກຳຂອງວຽກງານ ປັບປຸງຊີວິດການເປັນຢູ່.	• ການປະຕິບັດງານຂອງ ກຊກ , ກຸ່ມຜະລິດ • ກອງປະຊຸມຂອງ ກພກ ແລະ ການແຕ່ງກິນໂດຍນຳໃຊ້ອາຫານ ທີ່ເຂົາຜະລິດເອງ • ຜະລິດອຸປະກອນສື່ເພື່ອການ ປ່ຽນແປງພຶດຕິກຳທາງສັງຄົມ ແລະ ນຳໃຊ້ໂດຍ ກພກ/ກຊກ ສຳລັບຮູບແບບການຮຽນຮູ້ແບບ ເພື່ອສອນເພື່ອ • ຜະລິດທ່ອນຟືນສຳລັບດັງໄຟ ແລະ ມີການສັງຊື້ກັນ • ໃຫ້ເວລາສຳລັບແມ່ຍິງ ແລະ ເດັກນ້ອຍ • ສະໜອງເງິນກູ້ຢືມໃຫ້ກຸ່ມ ກຊກ	• ເພີ່ມຈຳນວນຂອງຊີ້ນສັດລ້ຽງທີ່ ຜະລິດໄດ້ • ເພີ່ມຈຳນວນຊີ້ນສັດທີ່ບໍລິໂພກ. • ເພີ່ມອັດຕາສ່ວນຮ້ອຍຂອງເດັກ ອາຍຸ 6-23 ເດືອນຈາກສະມາຊິກ ກຸ່ມສະມາຊິກ ກພກ ທີ່ບໍລິໂພກ ອາຫານຈາກ 4 ຫລື ຫລາຍກວ່າ ຂອງກຸ່ມອາຫານທີ່ແນະນຳ • ກຊກ, ກຸ່ມຜະລິດ ແລະ ກພກ ເປັນກຸ່ມທີ່ຢືນຢົງຊ່ວຍຕົນເອງໄດ້	

	• ฝอธ ຂອງ ສະມາຊິກ ກພກ ກ່ຽວກັບ ເຕັກນິກກະສິກຳ ແລະ ການລ້ຽງສັດ • ສ້າງຕັ້ງກຸ່ມສອນຄົວໂພຊະນາການ ຂອງ ສະມາຊິກ ກພກ ແລະ ການລົງຢ້ຽມ ຢາມສອນຄົວ	• ກອງປະຊຸມຂອງ ກພກ ໄດ້ມີ ການຈັດຂຶ້ນຢູ່ເລື້ອຍໆຕາມ ຕາຕະລາງ • ເພີ່ມຄວາມຮູ້ຂອງສະມາຊິດ ກຊກ ກັບເຕັກນິກການລ້ຽງສັດ ແລະ ກະສິກຳ		

V. ບັນດາຕົວຊີ້ວັດຂອງໂຄງການ ທີ່ ພະນັກງານທຸກຄົນຕ້ອງເຂົ້າໃຈ

ທລຍ ໄລຍະ 3 ໄລຍະເພີ່ມທຶນ ຍັງຮັກສາຈຸດປະສົງເດີມ ຄືກັນກັບ ທລຍ ໄລຍະ 3 ກ່ຳຄື ສົ່ງເສີມປັບປຸງການເຂົ້າເຖິງ ແລະ ການຊົມໃຊ້ພື້ນຖານໂຄງລ່າງ ແລະ ການບໍລິການຕ່າງໆ ຊຶ່ງແນ່ໃສ່ຊຸມຊົນຜູ້ທຸກຍາກ. ສືບຕໍ່ວຽກງານປັບປຸງຊີວິດການ ແລະ ໂພຊະນາການ ເພື່ອໃຫ້ເກີດມີຄວາມຍືນຍົງຂອງໂຄງການ ໂດຍຜ່ານຂະບວນການ ມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາທ້ອງຖິ່ນຂອງເຂົາເຈົ້າເອງ. ການສະແດງຜົນໄດ້ຮັບແມ່ນອີງໃສ່ຕົວຊີ້ບອກຜົນໄດ້ຮັບຂອງໂຄງການ ທີ່ຕົກລົງເຫັນດີ ລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ ຕາມເອກະສານ No. PAD**3134.ກ. ຈຸດປະສົງຂອງການພັດທະນາໂຄງການ ເພື່ອປັບປຸງການເຂົ້າເຖິງການ ບໍລິການ, ການຊຸກຍູ້ການຜະລິດ ແລະ ການບໍລິໂພກອາຫານ ທີ່ມີໂພຊະນາການ ຂອງຊຸມຊົນທຸກຍາກ ໃນພື້ນທີ່ເປົ້າໝາຍ ຂອງໂຄງການ** (PDO)

	ຄາດໝາຍສັງລວມແຕ່ລະໄລຍະ							ໝາຍເຫດ
ຊື່ຕົວຊີ້ວັດ ຈຸດປະສົງການພັດທະນາໂຄງການ (PDO)	**ຂໍ້ມູນ ພື້ນຖານ**	**ປີ 4 2019**	**ປີ 5 2020**	**ປີ 6 2021**	**ປີ 7 2022**	**ປີ 8 2023**	**ປີ 9 2024**	
ຈຳນວນຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ຈາກ ໂຄງການ	567,762	690,000	640,000	680,000	687,000	690,000	876,700	ເພີ່ມເປົ້າໝາຍ
		866,771[1]						

[1] Based on the number of beneficiaries (56,150 people) in 122 villages out of 450 villages where sub-projects are located in 2019 while other 298 villages have been received in PRF III Cycle XIV, Cycle XV and PRF II.

ຈຳນວນຜູ້ໄດ້ຮັບຜົນປະໂຫຍດທີ່ເປັນເພດຍິງ	53%	50.00	50.00	50.00	50.00	50.00	53.00	ເກົ່າ
		49.46						
ຈຳນວນຜູ້ໄດ້ຮັບຜົນປະໂຫຍດທີ່ເປັນຊົນເຜົ່າ	70%	70.00	70.00	70.00	70.00	70.00	70.00	ເກົ່າ
		82.91						
% ຂອງເວລາຫຼຸດລົງໃນການເຂົ້າເຖິງສຸກສາລາ - ທີ່ໄດ້ຮັບການລາຍງານວ່າ ເມື່ອເຈັບປ່ວຍ ມີບ່ອນຮັກສາ, ເວລາທີ່ໃຊ້ເພື່ອໄປຫາສະຖານທີ່ປິ່ນປົວທີ່ໃກ້ທີ່ສຸດ	0.00	87.12				80.00	80.00	ດັດແກ້ໃນໄລຍະເພີ່ມທຶນ
% ຂອງເວລາຫຼຸດລົງໃນການເຂົ້າເຖິງແຫຼ່ງນ້ຳ ທີ່ໄດ້ຮັບການລາຍງານວ່າ ສາມາດເຂົ້າເຖິງແຫຼ່ງນ້ຳ - ການເຂົ້າເຖິງແຫຼ່ງນ້ຳໃນຍາມຝົນ ແລະ ຍາມແລ້ງ.	0.00	81.00				80.00	80.00	ດັດແກ້ໃນໄລຍະເພີ່ມທຶນ
% ຂອງເວລາຫຼຸດ ໃນດິນທາງ ຕາມເສັ້ນທາງທີ່ໄດ້ຮັບການປັບປຸງ ຈາກໃຈການບ້ານ ຫາ ໃຈກາງກຸ່ມບ້ານ	0.00	46.38					40.00	ດັດແກ້ໃນໄລຍະເພີ່ມທຶນ
% ຂອງເວລາຫຼຸດລົງໃນການເຂົ້າເຖິງໂຮງຮຽນ ຂອງບ້ານທີ່ໄດ້ຮັບການລາຍງານວ່າ ສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກທີ່ມີຄຸນນະພາບ ດ້ານການສຶກສາ ກ່ອນ ແລະ ຫຼັງໄດ້ໂຄງການ	0.00	83.90					80.00	ດັດແກ້ໃນໄລຍະເພີ່ມທຶນ
% ຂອງເດັກນ້ອຍອາຍຸ 6-23 ເດືອນ ເປັນສະມາຊິກຂອງກຸ່ມໂພຊະນາການ ທີ່ບໍລິໂພກອາຫານ 4 ຢ່າງຂຶ້ນໄປ ຕາມຄຳແນະນຳ ເພື່ອປະເມີນຜົນໄດ້ຮັບໂດຍເນັ້ນໃສ່ວຽກງານຜົນໄດ້ຮັບຂອງວຽກງານໂພຊະນາການ ທີ່ໄດ້ສະໜັບສະໜູນໄລບະເພີ່ມທຶນ, ທີ່ມີການບໍລິໂພກທີ່ຫຼາກຫຼາຍ ຕາມການແນະນຳຂອງກຸ່ມ.	0.00	n/a				40.00	40.00	ໃໝ່ AF

# ຊີ້ນສັດທີ່ຜະລິດໄດ້ເປັນກິໂລ (ຫົວໜ່ວຍກິໂລ ກຼາມ) ເພີ່ມເຂົ້າຕົວຊີ້ວັດຜົນໄດ້ຮັບຂອງ ກຊກ	0.00	n/a	527,219	2,108,877	5,454,540		5,454,540	ໃໝ່ AF
	ຜົນໄດ້ຮັບໄລຍະຈັດຕັ້ງປະຕິບັດ (IRIs)							
ອົງປະກອບ1: ການພັດທະນາພື້ນຖານ ໂຄງລ່າງ ແລະ ວາງແຜນ		Cumulative Target Values						Comments
ຊື່ຕົວຊີ້ບອກ	ພື້ນຖານ 2015	ປີ 4 2019	ປີ 5 2020	ປີ 6 2021	ປີ 7 2022	ປີ 8 2023	ປີ 9 2024	
% ການປະກອບສ່ວນຂອງຊຸມຊົນ ທຽບໃສ່ມູນຄ່າທລຍ ປະກອບສ່ວນ.	11.00	7.00						ເກົ່າ ແຕ່ບໍ່ລາຍງານ AF
% ໂຄງການຍ່ອຍທີ່ມີຄຸນນະພາບດ້ານວິຊາການສູງ ຮັກສາໄວ້ແຕ່ບໍ່ລາຍງານໃນໄລຍະເພີ່ມທຶນ	85.00	85.00						ເກົ່າແຕ່ບໍ່ລາຍງານ ໃນ AF
		92.00[2]						
% ຂອງໂຄງລ່າງພື້ນຖານທີ່ກໍ່ສ້າງ ທີ່ໃຊ້ງານໄດ້ ເປັນປົກກະຕິຕາມມາດຕະຖານ (ເປີເຊັນ)	80.00	80.00	80.00	80.00	80.00	80.00	80.00	
	90[3]	94.98[4]					90[5]	
# ໂຄງການທັງໝົດທີ່ຈັດຕັ້ງປະຕິບັດ (ໂຕເລກ)	1,426	2800					3,440	
		3,099						
% ທີມງານຈັດຕັ້ງປະຕິບັດ (VIT) ທີ່ເປັນເພດຍິງ (ເປີເຊັນ)		n.a					40.00	ໃໝ່ AF
		31.00						
		8.00					16.00	

[2] For the Technical Beneficiary Assessment conducted in May 2018, confirmed that 92% is high technical quality and 8% is fair, it is weak to justify this finding.

[3] Based on the technical audit evaluation in 2016, 90% of sub-projects are good quality, 7% are fair and 3% are poor quality.

[4] data collected by PRF M&E team with cooperation with provincial and district team in March 2019, there are 131 of 2613 sub-projects are not functioning.

[5] Based on the technical audit evaluation in 2016, 90% of sub-projects are good quality, 7% are fair and 3% are poor quality.

ເພດຍິງທີ່ເປັນສະມາຊິກຂອງກຸ່ມສ້ອມແປງທາງທີ່ມີລາຍຮັບເພີ່ມຂຶ້ນ ຂອງຄອບຄົວທຸກຍາກໃນບ້ານ (ເປີເຊັນ)								ປະເມີນຄັ້ງດຽວ ຈາກທາງນອກ
% ເພີ່ມຂຶ້ນໃນການສະໜອງນ້ຳໃຫ້ພື້ນທີ່ການຜະລິດຫຼັງຈາກການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ.	n.a						50.00	ໃໝ່ AF
		n.a						
ອົງປະກອບ2: ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ແລະ ອົງການປົກຄອງທ້ອງຖິ່ນ								
% ຄົວເຮືອນໃນບ້ານໄດ້ຮັບຜົນປະໂຫຍດທີ່ເຂົ້າຮ່ວມໃນການຕັດເລືອກບູລິມະສິດ **(ເກົ່າ)**;	60.00	75.00						ເກົ່າ
		87.81[6]						
% ຂອງແຜນບຸລິມະສິດກຸ່ມບ້ານຂອງ ທລຍ ທີ່ເຊື່ອມສານເຂົ້າກັບແຜນຂອງເມືອງ (ເປີເຊັນ) -	0.00		50.00	70.00	75.00	75.00	75.00	ເກົ່າ (*ແຕ່ບໍ່ລາຍງານ ໃນ AF)*
		80.60						
% ຄົວເຮືອນທີ່ໄດ້ຮັບປະໂຫຍດມີຄວາມເພິ່ງພໍໃຈຕໍ່ຂະບວນການວາງແຜນແບບມີສ່ວນຮ່ວມຂອງ ທລຍ3	75.00			80.00		80.00	80.00	ເກົ່າ
% ສັດສ່ວນການຄັດເລືອກແຜນບຸລິມະສິດ ໂຄງການຍ່ອຍ ທລຍ3 ໂດຍແມ່ຍິງ(ເປີເຊັນ)	91.00	90.00	90.00	90.00	90.00	90.00		ເກົ່າ
		93.96						
	70.0	70.00	70.00	70.00	70.00	70.00		

[6] Based on the cumulative number of beneficiaries HHs from 2017+2018+2019 participated for voting their village priorities

% ສັດສ່ວນການຄັດເລືອກແຜນບຸລິມະສິດ ໂຄງການຫຍ່ອຍໂດຍຊົນເຜົ່າ(ເປີເຊັນ),		84.91						ເກົ່າ
# ຈຳນວນບ້ານທີ່ສາມາດວາງແຜນ, ຈັດຕັ້ງ ປະຕິບັດ ແລະ ຕິດຕາມແຜນພັດທະນາບ້ານຂອງ ເຂົາເຈົ້າ (ໂຕເລກ)	1,124	1,450					1,736	ເກົ່າ
		1,695[7]						
ອົງປະກອບ 3: ການບໍລິຫານໂຄງການ								
ປະເພດຄຳຄິດເຫັນ (ຄຳຮ້ອງຟ້ອງ ແລະ ບັນຫາ) ທີ່ໄດ້ລົງທະບຽນ ໄດ້ຮັບການແກ້ໄຂ (ເປີເຊັນ)	90.00	90.00	90.00	90.00	90.00	90.00		ເກົ່າ
		98.97[8]						
ອົງປະກອບ 4: ວຽກງານໂພສະນາການ ແລະ ປັບປຸງຊີວິດການເປັນຢູ່								
ກຊກ ມີໜີ້ເສຍ 4 % ແລະ ຕ່ຳກວ່າ (ເປີເຊັນ) **(ໄດ້ເອົາອອກ);**	60.00		60.00	70.00	70.00		70.00	ຕັດອອກ
ຈຳນວນສະມາຊິກ ທີ່ໄດ້ກູ້ຢືມທຶນຈາກ ກຊກ ໄປເຮັດກິດຈະກຳ (ຈຳນວນ)	4,054	8,000		24,000	28,000	30,000	34,000	ເກົ່າ
		9,962[9]						
ຄະນະບໍລິຫານ ກຊກ ຂັ້ນບ້ານ ທີ່ເປັນເພດຍິງ (VSMC) (ເປີເຊັນ)		n.a					65.00	ໃໝ່ AF
		63.5						
ຈຳນວນ ຄອບຄົວທີ່ເປັນສະມາຊິກໃນກຸ່ມໂພຊະ ນາການ (ຈຳນວນ)	0.00	7.200						14.300
		n/a						
	0.00	35.00	35.00		50.00	80.00	80.00	ໃໝ່ AF

[7] In 2019, there are 486 sub-projects located in 450 villages and there are 122 new villages. Therefore, cumulative is 1,573+122= 1,695 villages.

[8] During this reporting period PRF received with a total 1,115 feedback, 98 out of total are related to complaints while 97 complaints are solved (98.97%). This number will be updated in Annual Progress Report.

[9] Use the maximum number of members who took the loan from SHG to invest for livelihood activities.

# ຈຳນວນສະມາຊິກທີ່ໄດ້ກູ້ຢືມຢ່າງໜ້ອຍສອງຄັ້ງ (ເປີເຊັນ)								
ຕົວຊີ້ວັດເພີ່ມເຕີມທີ່ບໍ່ນອນໃນຄູ່ມື								
% ບ້ານທຸກ ແລະ ທຸກທີ່ສຸດ ທີ່ໄດ້ຮັບກິດຈະກຳ ຈາກ ທລຍ3	n/a	86.90[10]						ບໍ່ມີໃນ PAD ແຕ່ ພຽງລາຍງານ

ຄຳອະທິບາຍຕົວຊີ້ວັດຜົນໄດ້ຮັບ ທລຍ 3 ໄລຍະເພີ່ມທຶນ (2020-2024)

ເປົ້າໝາຍການພັດທະນາຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ (PDOs)

	ຕົວຊີ້ວັດໂຄງການ	ລາຍລະອຽດ	ໄລຍະ	ແບບຟອມທີ່ກ່ຽວຂ້ອງ	ແຫລ່ງຂໍ້ມູນ/ ວິທີການ	ຮັບຜິດຊອບ	ໄລຍະເວລາຂອງການລາຍງານ
1	#ຜູ້ໄດ້ຮັບຜົນປະ�โຫຍດໂດຍກົງ (ຕົວເລກ)	ຈຳນວນສະມາຊິກຄົວເຮືອນທັງໝົດ ໄດ້ຮັບຜົນປະโຫຍດຈາກການພັດທະນາພື້ນຖານໂຄງລ່າງ ຊຸມຊົນ ແລະ/ຫຼື ວຽກງານ ກຊກ	ປະຈຳປີ	ເອກະສານເກັບກຳຂໍ້ມູນກອງປະຊຸມວາງແຜນຂັ້ນບ້ານ (Village Vision Meeting form) ແລະ ບົດສະເໜີໂຄງການຍ່ອຍ	ລະບົບຖານຂໍ້ມູນ	ພັດທະນາຊຸມຊົນ ແລະ ວິສະວະກຳ	ບົດລາຍງານ 6 ເດືອນ (ທ້າຍເດືອນກໍລະກົດ)
2	%ຂອງແມ່ຍິງທີ່ໄດ້ຮັບຜົນປະโຫຍດ(ເປີເຊັນ)	ອີງຕາມການປະເມີນຜົນ ແລະ ລາຍລະອຽດຂອງຜູ້ໄດ້ຮັບຜົນປະโຫຍດຈາກໂຄງການໂດຍກົງ, ເຊິ່ງລະບຸເປີເຊັນຂອງແມ່ຍິງທີ່ໄດ້ຮັບຜົນປະโຫຍດ ວ່າມີເທົ່າໃດ	ປະຈຳປີ	ເອກະສານເກັບກຳຂໍ້ມູນກອງປະຊຸມວາງແຜນຂັ້ນບ້ານ (Village Vision Meeting form) ແລະ ບົດສະເໜີໂຄງການຍ່ອຍ	ລະບົບຖານຂໍ້ມູນ	ພັດທະນາຊຸມຊົນ ແລະ ວິສະວະກຳ	ບົດລາຍງານ 6 ເດືອນ (ທ້າຍເດືອນກໍລະກົດ)

[10] In 2019, there are 455 sub-project(s) located in 420 villages where 365 are the poorest and poor villages, and 55 are moderately poor villages and data will be updated in annual progress report period.

3	%ຂອງຊົນເຜົ່າທີ່ໄດ້ຮັບຜົນປະໂຫຍດ (ເປີເຊັນ)	ອີງຕາມຈຳນວນຜູ້ໄດ້ຮັບຜົນປະໂຫຍດໂດຍກົງໃນບ້ານເປົ້າໝາຍ	ປະຈຳປີ	ເອກະສານເກັບກຳຂໍ້ມູນກອງປະຊຸມວາງແຜນຂັ້ນບ້ານ (Village Vision Meeting form) ແລະ ບົດສະເໜີໂຄງການຍ່ອຍ (I-SPP Form)	ລະບົບຖານຂໍ້ມູນ	ພັດທະນາຊຸມຊົນ ແລະ ວິສະວະກຳ	ບົດລາຍງານ 6 ເດືອນ (ທ້າຍເດືອນກໍລະກົດ)
4	%ຂອງເວລາຫຼຸດລົງໃນການເຂົ້າເຖິງສຸກສາລາ (ເປີເຊັນ)	ເວລານາທີ ທີ່ຍ່າງໄປຫາສຸກສາລາທີ່ໃກ້ທີ່ສຸດ ກ່ອນ ແລະ ຫຼັງໂຄງການ. ປະເມີນຈາກກຸ່ມສະມາຊິກຍິງ-ຊາຍ ພາຍໃນບ້ານ	ປະຈຳປີ	ຂໍ້ມູນຂັ້ນບ້ານ	ການສຳຫລວດຄົວເຮືອນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
5	%ຂອງເວລາຫຼຸດລົງໃນການເຂົ້າເຖິງແຫຼ່ງນ້ຳ (ເປີເຊັນ)	ເວລານາທີ ທີ່ຍ່າງໄປຫາແຫຼ່ງນ້ຳສະອາດທີ່ໃກ້ທີ່ສຸດກ່ອນ ແລະ ຫຼັງໂຄງການ. ປະເມີນຈາກກຸ່ມສະມາຊິກຍິງ-ຊາຍ ພາຍໃນບ້ານ	ກ່ອນ ປິດ ໂຄງການ		ການສຳຫລວດຄົວເຮືອນ	ຂະແໜງຕິດຕາມ-ປະເມີນຜົນ	
6	%ຂອງເວລາຫຼຸດ ໃນດິນທາງຕາມເສັ້ນທາງທີ່ໄດ້ປຸງ ຈາກ ໃຈການບ້ານ ຫາ ໃຈກາງກຸ່ມບ້ານ (ເປີເຊັນ)	ເວລາທີ່ໃຊ້ໃນການເດີນທາງໂດຍລົດຈັກ ແລະ ການເຂົ້າເຖິງຖະໜົນຫົນທາງ ແລະ ເວລາທີ່ໃຊ້ໃນການເດີນທາງໄປຫາໃຈກາງກຸ່ມບ້ານ ກ່ອນ ແລະ ຫຼັງໂຄງການ. ປະເມີນຈາກກຸ່ມສະມາຊິກຍິງ-ຊາຍ ພາຍໃນບ້ານ	ກ່ອນ ປິດ ໂຄງການ		ການສຳຫລວດຄົວເຮືອນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
7	%ຂອງເວລາຫຼຸດລົງໃນການເຂົ້າເຖິງໂຮງຮຽນ (ເປີເຊັນ)	ເວລາທີ່ໃຊ້ໃນ ການເຂົ້າເຖິງໂຮງຮຽນທີ່ໃກ້ທີ່ສຸດ ກ່ອນ ແລະ ຫຼັງໂຄງການ. ປະເມີນຈາກກຸ່ມສະມາຊິກຍິງ-ຊາຍ ພາຍໃນບ້ານ	ກ່ອນ ປິດ ໂຄງການ		ການສຳຫລວດຄົວເຮືອນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
8	% ຂອງເດັກນ້ອຍອາຍຸ 6-12 ເດືອນ ເປັນສະມາຊິກຂອງກຸ່ມໂພຊະນາການ ທີ່ບໍລິໂພກອາຫານ 4 ຢ່າງຂຶ້ນໄປ ຕາມຄຳແນະນຳ (ໃໝ່)	ເປີເຊັນຂອງເດັກນ້ອຍອາຍຸ 6-23 ເດືອນ ຈາກກຸ່ມຄົວເຮືອນໂພຊະນາການ ທີ່ລາຍງານວ່າໄດ້ບໍລິໂພກອາຫານ ຢ່າງນ້ອຍ 4 ໝູ່ ຈາກ 9 ໝູ່ອາຫານ(ໃຊ້ຕາມການຈຳແນກຂອງໝວດໝູ່ອາຫານ ອີງຕາມການແນະນຳຂອງສາກົນ)	ສອງຄັ້ງ		ການສຳຫລວດຄົວເຮືອນ	ບໍລິສັດພາຍນອກ	ບົດລາຍງານກ່ອນ ປິດໂຄງການ

9	ຈຳນວນຊິ້ນສັດທີ່ຜະລິດໄດ້ເປັນກິໂລ (ຫົວໜ່ວຍກິໂລກຼາມ)	ກິໂລຊິ້ນຜະລິດທັງໝົດ(ໄກ່, ໝູ ແລະ ແບ້) ອີງຕາມສະເລ່ຍນ້ຳໜັກຂອງສັດແຕ່ລະຊະນິດເປັນ ຕໍ່ໄລຍະເວລາຂອງສັດທັງໝົດຜະລິດໂດຍກຸ່ມ ກຊກ ທີ່ໄດ້ກູ້ຢືມເງິນຈາກກອງທຶນ ກຊກ ຫຼື ກອງທຶນ ສຳລັບກຸ່ມຜະລິດ.	ສອງຄັ້ງ			ວຽກງານປັບປຸງຊີວິດການເປັນຢູ່	ບົດລາຍງານປະຈຳປີ

ແຜນຕິດຕາມ-ປະເມີນຜົນ: ຕົວຊີ້ວັດຜົນໄດ້ຮັບໄລຍະກາງ

	ຕົວຊີ້ວັດໂຄງການ	ຄຳອະທິບາຍ	ໄລຍະ	ແບບຟອມທີ່ກ່ຽວຂ້ອງ	ແຫຼ່ງຂໍ້ມູນ	ຜູ້ຮັບຜິດຊອບ	ໄລຍະຂອງການລາຍງານ
1	%ການປະກອບສ່ວນຂອງຊຸມຊົນ (ເປີເຊັນ)		ປະຈຳປີ		ລະບົບຖານຂໍ້ມູນ	ວິສະວະກຳ	ບົດລາຍງານ 6 ເດືອນ
2	%ຄົວເຮືອນໃນບ້ານໄດ້ຮັບຜົນປະ�โຫຍດທີ່ເລືອກບູລິມະສິດ (ເປີເຊັນ)	ຈຳນວນຄົວເຮືອນທັງໝົດໃນບ້ານທີ່ໄດ້ຮັບຜົນປະโຫຍດ ທານກັບຈຳນວນຄົວເຮືອນທີ່ເຂົ້າຮ່ວມກອງປະຊຸມຄັດເລືອໂຄງການຍ່ອຍ		ແບບຟອມຂອງລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	
3	ປະເພດຄຳຄິດເຫັນ (ຄຳຮ້ອງຟ້ອງ) ທີ່ໄດ້ລົງຖະບຽນ ໄດ້ຮັບການແກ້ໄຂ (ເປີເຊັນ)	ຈຳນວນຄຳຮ້ອງທີ່ໄດ້ຮັບຈາກເອກະສານ, ໂທລະສັບ, ໂທລະສັບ, ຫຼື ຂໍ້ຄວາມ ທີ່ໄດ້ບັນທຶກ ແລະ ໄດ້ຮັບການແກ້ໄຂ ຢ່າງໜ້າເພິ່ງພໍ່ໃຈ		ແບບຟອມຂອງລະບົບຖານຂໍ້ມູນ	ຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	
4	ກຊກ ມີໜີ້ເສຍ 4 % ແລະ ຕ່ຳກວ່າ (ເປີເຊັນ) **ຕັດອອກ**						
5	%ໂຄງການຍ່ອຍທີ່ມີຄຸນນະພາບດ້ານວິຊາການສູງ (ເປີເຊັນ)	ໂຄງການຍ່ອຍທັງໝົດທີ່ຖືກຈັດວ່າມີຄຸນນະພາບ "ສູງ" ໂດຍບໍລິສັດພາຍນອກ ເພື່ອປະເມີນຄຸນນະພາບດ້ານວິຊາການຂອງການກໍ່ສ້າງ, ຂອງການຄັດເລືອກໂຄງການທີ່ສຳເລັດ	2 ຄັ້ງ	ບົດລາຍງານຂອງທີ່ປຶກສາ	ກວດສອບດ້ານເຕັກນິກ	ບໍລິສັດພາຍນອກ	ບົດລາຍງານປະຈຳປີ

6	% ຂອງແຜນບຸລິມະສິດກຸ່ມບ້ານຂອງ ທລຍ ທີ່ເຊື່ອມສານເຂົ້າກັບແຜນຂອງເມືອງ (ເປີເຊັນ)	ຈຳນວນທັງໝົດຂອງກອງປະຊຸມການວາງແຜນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມຂັ້ນເມືອງ ຫານກັບ ຈຳນວນກອງປະຊຸມຕົວແທນຂັ້ນກຸ່ມບ້ານ		ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
7	# ສະມາຊິກ ທີ່ໄດ້ກູ້ຢືມທຶນ ຈາກ ກຊກ (ຈຳນວນ)	ຈຳນວນສະມາຊິກ ທີ່ໄດ້ກູ້ຢືມທຶນໝຸນວຽນ ຂອງ ກຊກ		ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	
8	% ຂອງໂຄງລ່າງພື້ນຖານທີ່ກໍ່ສ້າງ ທີ່ໃຊ້ງານໄດ້ເປັນປົກກະຕິຕາມມາດຕະຖານ (ເປີເຊັນ)	ກວດສອບຄຸນນະພາບເວລາສຳເລັດໂຄງການ. ຕິດຕາມ 6 ເດືອນ ແລະ 12 ເດືອນ ປະເມີນວ່າການລົງທຶນດ້ານພື້ນໂຄງລ່າງ ວ່າໃຊ້ງານໄດ້ເປັນປົກກະຕິຕາມ ມາດຕະຖານ	ເຄິ່ງປີ	ແບບຟອມຂອງ ລະບົບຖານຂໍ້ມູນ	ການກວດກາຄຸນ ນະພາບ	ພັດທະນາຊຸມຊົນ	ບົດລາຍງານ 6 ເດືອນ (ທ້າຍເດືອນ ກໍລະກົດ)
9	% ຄົວເຮືອນທີ່ຢູ່ໃນບ້ານໄດ້ຮັບຜົນປະໂຫຍດ ມີຄວາມເພິ່ງພໍໃຈກັບຂະບວນການ ວາງແຜນແບບມີສ່ວນຮ່ວມ ທີ່ສະໜັບສະໜູນໂດຍ ທລຍ (ເປີເຊັນ)	ເປີເຊັນຄົວເຮືອນໃນບ້ານ ທີ່ສະແດງຄວາມ ເພິ່ງພໍໃຈ ຫຼື ເພິ່ງພໍໃຈທີ່ສຸດ ໃນການຕອບ ຄຳຖາມການສຳຫຼວດ	3 ຄັ້ງ	ບົດລາຍງານຂອງທີ່ ປຶກສາ	ການສົນທະນາກຸ່ມ ຄົວເຮືອນເປົ້າໝາຍ	ບໍລິສັດພາຍນອກ	
10	ຄະນະບໍລິຫານ ກຊກ ຂັ້ນ ບ້ານ ທີ່ເປັນເພດຍິງ (VSMC) (ເປີເຊັນ)	ໂຄງການຍ່ອຍທີ່ເປັນບຸລິມະສິດຂອງ ພົນລະເມືອງທີ່ເປັນ**ເພດຍິງ**	3 ຄັ້ງ	ໜ້າທີ່ຮັບຜິດຊອບ ກຊກ	ປັງປຸງຊີວິດການ ເປັນຢູ່	ລະບົບຖານຂໍ້ມູນ	ບົດລາຍງານ 6 ເດືອນ (ທ້າຍເດືອນ ກໍລະກົດ)
411	ຈຳນວນໂຄງການທັງໝົດທີ່ ຈັດຕັ້ງປະຕິບັດ (ຈຳນວນ)	% ໂຄງການຍ່ອຍທີ່ໄດ້ຮັບການປະເມີນວ່າຢູ່ ໃນສະພາບດີ ຫລື ເປັນທີ່ຍອມຮັບໄດ້ ໂດຍ ວິສະວະກອນທີ່ມີຄຸນວຸດທິ	ປີລະຄັ້ງ	ເອກະສານບັນທຶກຄຸນ ນະພາບຂອງໂຄງການ FIR-Form	ການສຳຫລວດ	ບໍລິສັດພາຍນອກ	ບົດລາຍງານປະຈຳ ປີ
12	ສັດສ່ວນການຄັດເລືອກແຜນ ບຸລິມະສິດໂດຍແມ່ຍິງ (ເປີເຊັນ)	ຈຳນວນໂຄງການຍ່ອຍທີ່ຖືກຮັບຮອງ ຫານ ກັບຈຳນວນໂຄງການຍ່ອຍທີ່ຖືກຈັດເປັນ ບຸລິມະສິດສູງສຸດ ໂດຍກຸ່ມແມ່ຍິງ ໃນ		ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	

		ລະຫว่างขั้นตอนการให้บุลิมะสิด ແລະ ວางแผนขั้นบ้าน.					
13	ຈຳນວນຄອບຄົວທີ່ເປັນສະມາຊິກໃນກຸ່ມໂພຊະນາການ (ຈຳນວນ)	ຈຳນວນຄອບຄົວທີ່ເປັນສະມາຊິກໃນກຸ່ມໂພຊະນາການທັງໝົດ ທີ່ໂຄງການຊ່ວຍເຫຼືອ	ປີລະຄັ້ງ	ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
14	%ທີມງານຈັດຕັ້ງປະຕິບັດທີ່ເປັນເພດຍິງ(ເປີເຊັນ)	% ຄົວເຮືອນໃນບ້ານທີ່ໄດ້ຮັບຜົນປະໂຫຍດທີ່ສະແດງຄວາມເພິ່ງພໍໃຈຕໍ່ກັບຂະບວນການວາງແຜນແບບມີສ່ວນຮ່ວມ ທີ່ສະໜັບສະໜູນໂດຍ ທລຍ 3	ປີລະຄັ້ງ	ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
15	ສັດສ່ວນການຄັດເລືອກແຜນບຸລິມະສິດໂດຍຊົນເຜົ່າ (ເປີເຊັນ)	ໂຄງການຍ່ອຍທີ່ເປັນບູລິມະສິດຂອງພົນລະເມືອງທີ່ເປັນ**ຊົນເຜົ່າ**	ປີລະຄັ້ງ	ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
16	ຈຳນວນສະມາຊິກທີ່ໄດ້ກູ້ຢືມຢ່າງໜ້ອຍສອງຄັ້ງ (ເປີເຊັນ)	ເປີເຊັນຂອງສະມາຊິກ ກຊກ ທັງໝົດ ທີ່ໄດ້ກູ້ຢືມເງິນຢ່າງໜ້ອຍສອງຄັ້ງ. ການຕີລາຄານີ້ບໍ່ຕ້ອງສົ່ງເງິນຄືນເຕັມຈຳນວນ ກໍ່ສາມາດເອົາເງິນກູ້ຄັ້ງທີ່ສອງໄດ້.	ປີລະຄັ້ງ	ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຂະແໜງຕິດຕາມ-ປະເມີນຜົນ	ບົດລາຍງານປະຈຳປີ
17	%ເພດຍິງທີ່ເປັນສະມາຊິກທີ່ເປັນສະມາຊິກຂອງກຸ່ມສ້ອມແປງທາງທີ່ມີລາຍຮັບເພີ່ມຂຶ້ນ 8% ຂອງຄອບຄົວທຸກຍາກໃນບ້ານ(ເປີເຊັນ)	ຂໍ້ມູນຈຳນວນແມ່ຍິງທີ່ສ້າງລາຍຮັບມາຈາກການສຳຫຼວດພື້ນຖານ ແລະ ສິ້ນສຸດ	2 ຄັ້ງ	ການສຳຫລວດຄົວເຮືອນ	ບໍລິສັດພາຍນອກ	ວິຊາການ ແລະ ປະເມີນຜົນ	ບົດລາຍງານປະຈຳປີ
18	ຈຳນວນບ້ານທີ່ສາມາດວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມແຜນພັດທະນາບ້ານຂອງເຂົາເຈົ້າ(ໂຕເລກ)	ຈຳນວນບ້ານທີ່ ທລຍ ໄດ້ຈັດຝຶກອົບຮົມເພື່ອກະກຽມແຜນພັດທະນາບ້ານ	ປີລະຄັ້ງ	ແບບຟອມຂອງ ລະບົບຖານຂໍ້ມູນ	ລະບົບຖານຂໍ້ມູນ	ຕິດຕາມ-ປະເມີນຜົນ	

19	ພື້ນທີ່ການຜະລິດເພີ່ມຂຶ້ນ ຈາກການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ (ເຮັກຕ້າ)	ເປີເຊັນນ້ຳທີ່ສາມາດສະໜອງໃຫ້ພື້ນທີ່ການຜະລິດ ເປັນຜົນຂອງການລົງທຶນດ້ານໂຄງລ່າງພື້ນຖານຂອງໂຄງການຍ່ອຍ ຂອງ ທລຍ	ປະຈຳປີ	ສອງຄັ້ງ 1. ຂັ້ນຕອນການອອກແບບໂຄງການ 2. ການປະເມີນຜົນສຳເລັດໂຄງການ	ລະບົບຖານຂໍ້ມູນ	ຊຸມຊົນກະກຽມແບບຟອມອອກແບບໂຄງການຍ່ອຍ. ທລຍ ກວດສອບຫຼັງສຳເລັດໂຄງການ.	ບົດລາຍງານ 6 ເດືອນ (ທ້າຍເດືອນກໍລະກົດ)

ຂໍ້ມູນຕົວຊີ້ວັດຂອງ SDC ກ່ຽວກັບຈຳນວນຜູ້ເຂົ້າຮ່ວມກອງປະຊຸມ ວາງແຜນຂັ້ນບ້ານ ທີ່ເປັນເດພຍິງ ແລະ ຊົນເຜົ່າ

	ຜູ້ເຂົ້າຮ່ວມໃນການວາງແຜນການພັດທະນາຂັ້ນບ້ານ 2017–2019 (ທລຍ3)		
ແຂວງ	**ຜູ້ເຂົ້າຮ່ວມ**	**ແມ່ຍິງ**	**ຊົນເຜົ່າ**
ອັດຕະປື	4,502	2,580	4,251
ຫົວພັນ	15,060	8,145	7,193
ຫຼວງນ້ຳທາ	3,501	1,638	3,425
ຫຼວງພະບາງ	10,869	6,623	9,522
ອຸດົມໄຊ	13,750	7,588	13,023
ຜົ້ງສາລີ	4,822	2,319	4,702
ສາລະວັນ	10,258	5,936	9,903
ສະຫວັນນະເຂດ	15,968	8,809	13,774
ເຊກອງ	4,020	2,053	3,769
ຊຽງຂວາງ	4,278	2,316	3,636
ລວມທັງໝົດ	87,028	48,007	73,198
		55.2%	**84.1%**

ແຫຼງຂໍ້ມູນ: ຕິດຕາມ-ປະເມີນຜົນ ທລຍ

VI. ຂໍ້ມູນອື່ນໆ ທີ່ຕ້ອງເອົາເຂົ້າລະບົບຖານຂໍ້ມູນ ແລະ ລາຍງານ

- ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ **"ວາງແຜນພັດທະນາບ້ານ ທີ່ໄດ້ໂຄງການ"**
- ຈຳນວນປະຊາກອນທັງໝົດພາຍໃນບ້ານ (ຈຳ ນວນທັງໝົດ, ຈຳນວນແມ່ຍິງ ແລະ ຊົນເຜົ່າ)
- ຈຳນວນໂຄງການຍ່ອຍ ຂອງ ແຜນພັດທະນາກຸ່ມບ້ານ ທີ່ຖືກຈັດຕັ້ງປະຕິບັດໂດຍໜ່ວຍງານ ແລະ ພາກສ່ວນອື່ນໆ.
- ທຶນສົມທົບຈາກ ທລຍ ເປັນທຶນທີ່ ທລຍ ຈ່າຍໃຫ້ຊຸມຊົນ ແລະ ຜູ້ຮັບເໝົາ ບໍ່ລວມທຶນປະກອບສ່ວນຊຸມຊົນ ແລະ ອັດຕາແຮງງານຂອງຊຸມຊົນ (ຈຳນວນມື້ຕໍ່ແຮງງານ).
- ຄະນະກຳມະການຄຸ້ມຄອງການນຳໃຊ້ ແລະ ບົວລະບັດຮັກສາໂຄງການຍ່ອຍ.
- ຂັ້ນຕອນການກວດກາ ຫຼື ການກັ່ນຕອງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ (ການຄິດໄລ່ຜົນກະທົບຕ່າງໆ).
- ຂັ້ນຕອນການປະເມີນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດ ແລະ ບັນດາເອກະ ສານ ລວມທັງຂະບວນ ການຕ່າງໆທີ່ກ່ຽວຂ້ອງ ຕ້ອງໃຫ້ປະຕິບັດສຳເລັດ.
- ຂໍ້ມູນກ່ຽວກັບ %ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ
- ຄວາມເພິ່ງພໍໃຈຂອງຊຸມຊົນຕໍ່ກັບໂຄງການຍ່ອຍທີ່ໄດ້ຮັບ ຜ່ານເງື່ອນໄຂຕ່າງໆ.
- ຂໍ້ມູນກ່ຽວກັບການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ
- ຂໍ້ມູນກ່ຽວກັບການຈັດຊື້ຈັດຈ້າງຕ່າງໆ
- ຂໍ້ມູນກ່ຽວກັບການນຳໃຊ້ງົບປະມານ ແຕ່ລະອົງປະກອບ ແລະ ແຫຼ່ງທຶນ ແລະ ຂໍ້ມູນອື່ນໆຂອງໂຄງການ.